ຂໍແຈ້ງໃຫ້ບັນດາທ່ານຊາບກ່ຽວກັບການສັກຢາວັກຊີນCOVID-19 ໃຫ້ແກ່ຊາວຕ່າງປະເທດ.

ການສັກຢາວັກຊີນເປັນວິທີທີ່ມີປະສິດທິພາບທີ່ສຸດໃນການປ້ອງກັນບໍ່ໃຫ້ເກີດກໍລະນີຮ້າຍແຮງຫຼືເສຍຊີວິດຈາກCOVID-19.

ກະລຸນາເຂົ້າຮ່ວມການສັກວັກຊີນເພື່ອສຸຂະພາບຂອງຕົນເອງແລະຄອບຄົວ.

## ເປົ້າໝາຍຜູ້ທີ່ຈະສັກຢາວັກຊີນ

☐ ເດັກ **(ອາຍຸ 5-11): ສັກວັກຊີນ ຄັ້ງທຳອິດ ແລະ ຄັ້ງທີ ສອງ**

☐ ຊາວໜຸ່ມ **(ອາຍຸ 12-17): ສັກວັກຊີນ ຄັ້ງທີ 1 ຫາຄັ້ງທີ 3**

☐ ຜູ້ໃຫຍ່ **(ອາຍຸ 18 ຂື້ນໄປ): ສັກວັກຊີນຄັ້ງທີ 1 ຫາ ຄັ້ງທີ 4.**

* ຜູ້ທີ່ໄດ້ຮັບການສັກຢາວັກຊີນຄັ້ງທີສີ່ ແມ່ນ ຜູ້ທີ່ມີອາຍຸ 50 ປີຂື້ນໄປ ຫລື ອາຍຸ 18 ປີ ຂື້ນໄປ, ຊຶ່ງເປັນຜູ້ທີ່ໄດ້ຮັບວັກຊີນຄັ້ງທີສາມແລ້ວ. ບຸກຄົນທີ່ມີພະຍາດປະຈຳຕົວ, ຜູ້ທີ່ມີພູມຕ້ານທານຕ່ຳ, ຜູ້ທີ່ກຳລັງປິ່ນປົວໃນໂຮງໝໍ, ຫລືຜູ້ທີ່ປະຕິບັດວຽກງານໃນສະຖານທີ່ໆມີຄວາມສ່ຽງໃນການຕິດເຊື້ອ.

## ຊະນິດຂອງ ວັກຊີນ

☐ ເດັກນ້ອຍ **(ອາຍຸ 5-11):** Pfizer **ສຳລັບເດັກນ້ອຍ**

☐ ຊາວໜຸ່ມ **(ອາຍຸ 12-17):** Pfizer

☐ ຜູ້ໃຫຍ່ **(ອາຍຸ 18 ຂື້ນໄປ):** Pfizer/Moderna,* Janssen,** Novavax

* ວັກຊີນຊະນິດ Moderna ຂໍແນະນຳໃຫ້ສັກກັບຜູ້ທີ່ມີອາຍຸຫຼາຍກວ່າ 30 ປີຂື້ນໄປ

** ວັກຊີນຊະນິດ Janssen ອະນຸຍາດໃຫ້ນຳໃຊ້ໃນກໍລະນີພິເສດເທົ່ານັ້ນ

## ໄລຍະຫ່າງທີ່ຈຳເປັນລະຫວ່າງ ການສັກວັກຊີນ

☐ **ລະຫວ່າງການສັກວັກຊີນຄັ້ງທີໜຶ່ງ ແລະ ຄັ້ງທີສອງ**

- Pfizer/Moderna: 8 ອາທິດ
- Novavax: 3 ອາທິດ

☐ການສັກຢາຄັ້ງທີ3:ຕ້ອງມີໄລຍະຫ່າງ3ເດືອນ ຫລັງຈາກການສັກວັກຊີນ **ຄັ້ງທີ ສອງ**

*ສຳລັບJanssen,ການສັກຢາຄັ້ງທີ2ຕ້ອງມີໄລຍະຫ່າງ 2 ເດືອນ ຫລັງຈາກການສັກວັກຊີນ ຄັ້ງທີ ໜຶ່ງ.

☐ການສັກຢາຄັ້ງທີ4:ຕ້ອງມີໄລຍະຫ່າງ4ເດືອນ ຫລັງຈາກການສັກວັກຊີນ **ຄັ້ງທີ ສາມ.**

*ສຳລັບJanssen:ການສັກຢາຄັ້ງທີ3: ຕ້ອງມີໄລຍະຫ່າງ 4 ເດືອນ ຫລັງຈາກການສັກວັກຊີນ ຄັ້ງທີ ສອງ.

## ວິທີສະໝັກສັກວັກຊີນ

☐ ການລົງທະບຽນຂອງຄົນຕ່າງປະເທດ: ສາມາດລົງທະບຽນຈອງທາງອອນລາຍ, ໂທຈອງທາງໂທລະສັບ ແລະ ເຂົ້າໄປສັກຢາໄດ້ໃນມື້ດຽວກັນ

☐ ຄົນຕ່າງດ້າວທີ່ບໍ່ມີເອກະສານ: ຫລັງຈາກໄດ້ຮັບເອກະສານເລກຄຸ້ມຄອງຊົ່ວຄາວຈາກສູນກາງສາທາລະນະ ສຸກກໍສາມາດສັ່ງຈອງໄດ້ທາງໂທລະສັບ ຫຼື ເຂົ້າໄປທີ່ສະຖາບັນສັກຢາວັກຊີນທີ່ກ່ຽວຂ້ອງ

☐ ຄົນຕ່າງດ້າວທີ່ໄດ້ຮັບການສັກຢາວັກຊີນເບື້ອງຕົ້ນຢູ່ຕ່າງປະເທດແລ້ວ.ຄົນຕ່າງດ້າວທີ່ມີໃບຢັ້ງຢືນສຳເລັດການສັກວັກຊີນແລ້ວ: ສາມາດສັ່ງຈອງໄດ້ຫລັງຈາກລົງທະບຽນຂອງປະຫວັດການສັກວັກຊີນ ຢູ່ສູນກາງສາທາລະນະສຸກ.

## ※ ຂໍ້ມູນອື່ນໆເພີ່ມຕື່ມ

ㅇ**ສຳລັບກໍລະນີຂອງເດັກນ້ອຍແລະ ໄວໜຸ່ມ, ເຂົາເຈົ້າຈະຕ້ອງໄດ້ໄປພ້ອມກັບຜູ້ປົກຄອງ ຫຼື ຕົວແທນທີ່ຖືກຕ້ອງຕາມກົດໝາຍເພື່ອ**ຄວາມປອດໄພ ແລະ ການຕິດຕາມການສັກຢາ.

ㅇ ສາມາດ**ຈອງທາງອອນລາຍໄດ້ຕາມທີ່ຢູ່ນີ້**: https://ncvr.kdca.go.kr

ㅇ **ການຈອງທາງໂທລະສັບ**: **ກະລຸນາໂທຫາ** ສູນຄວບຄຸມ ແລະ ປ້ອງກັນພະຍາດເກົາຫຼີ (KDCA) (☎1339) ຫຼື ສູນກາງໂທລະສັບ ລັດຖະບານທ້ອງຖິ່ນຂອງທ່ານ.

ㅇ**ການສັກຢາວັກຊີນໃນມື້ດຽວກັນ:ການສັກຢາວັກຊີນໃນມື້ດຽວກັນ ຫລັງຈາກລົງທະບຽນຕາມບັນຊີ ໃນເບື້ອງຕົ້ນ ຢູ່ສະຖາບັນການແພດແລ້ວ (ໄດ້ຮັບການຢືນຢັນທາງໂທລະສັບ).**